**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ທະນາຄານແຫ່ງ ສປປ ລາວ

ຫ້ອງການ

ເລກທີ 105/ຫກ

ນະຄອນຫຼວງວຽງຈັນ, ວັນທີ 13 ເມສາ 2023

# ແຈ້ງການ

**ເຖິງ: ບັນດານັກສຶກສາທີ່ຮຽນຈົບສາຂາວິຊາທີ່ກ່ຽວຂ້ອງ ຢູ່ພາຍໃນ ແລະ ຕ່າງປະເທດ.**

**ເລື່ອງ: ການຮັບສະໝັກພະນັກງານໃນຕຳແໜ່ງງານສ້ອມແປງທົ່ວໄປ.**

- ອີງຕາມຄວາມຮຽກຮ້ອງຕ້ອງການຂອງໜ້າທີ່ວຽກງານດ້ານວິຊາສະເພາະ ຢູ່ໂຮງພິມທະນະບັດ ທະນາຄານແຫ່ງ ສປປ ລາວ.

ຫ້ອງການ, ທະນາຄານແຫ່ງ ສປປ ລາວ ຂໍຖືເປັນກຽດແຈ້ງມາຍັງບັນດາທ່ານ ຊາບວ່າ: ໂຮງພິມທະນະບັດ ທະນາຄານແຫ່ງ ສປປ ລາວ ມີຄວາມຕ້ອງການຮັບສະໝັກພະນັກງານໃນຕຳແໜ່ງງານສ້ອມແປງທົ່ວໄປ ຈຳນວນ 02 ທ່ານ ຊຶ່ງມີມາດຕະຖານ-ເງື່ອນໄຂຂອງຜູ້ສະໝັກ ມີຄືດັ່ງນີ້:

**I. ມາດຕະຖານຂອງຜູ້ສະໝັກ:**

1. ເພດຊາຍ, ອາຍຸບໍ່ເກີນ 35 ປີ;
2. ວຸດທິການສຶກສາຈົບຊັ້ນສູງຂຶ້ນໄປ ໃນສາຂາວິຊາໄຟຟ້າ ຫຼື ສາຂາວິຊາກົນຈັກ, ຊັ້ນກາງ ໃນສາຂາວິຊາດັ່ງກ່າວ ໂດຍຕ້ອງມີປະສົບການ 3 ປີຂຶ້ນໄປ;
3. ມີຜົນຄະແນນການຮຽນ (GPA): 50% ຂຶ້ນໄປ ໃນສາຂາທີ່ກຳນົດຂ້າງເທິງ;
4. ມີຄວາມຮູ້ພື້ນຖານໃນການນຳໃຊ້ຄອມພິວເຕີ ແລະ ທັກສະພາສາອັງກິດ, ພາສາຫວຽດນາມ ຫຼື ພາສາຕ່າງປະເທດໃດໜຶ່ງ ໃນລະດັບດີ.

**II. ເງື່ອນໄຂຂອງຜູ້ສະໝັກ:**

1. ຊີວະປະຫວັດການເຄື່ອນໄຫວຈະແຈ້ງ ແລະ ເປັນພົນລະເມືອງດີ;
2. ສັດຊື່ບໍລິສຸດ, ມີມະນຸດສຳພັນດີ ແລະ ມີສຸຂະພາບແຂງແຮງດີ;
3. ມີຄວາມຫ້າວຫັນ, ອົດທົນ ແລະ ມີຄວາມສາມັກຄີກັບເພື່ອນຮ່ວມງານ;
4. ສຳລັບຜູ້ມີປະສົບປະການມາກ່ອນ ຈະໄດ້ຮັບການພິຈາລະນາເປັນກໍລະນີພິເສດ.

**III. ວິທີການສະໝັກ ແລະ ການເປີດ-ປິດຮັບເອກະສານການສະໝັກງານ:**

1. ເອກະສານການສະໝັກງານ ມີຄືດັ່ງນີ້:

- ໃບຄຳຮ້ອງຂຽນດ້ວຍຕົນເອງ;
- ຊີວະປະຫວັດ 4 ໜ້າ ພ້ອມທັງເຊັນຢັ້ງຢືນຈາກຜູ້ປົກຄອງ ແລະ ເຊັນປະທັບກາຈາກນາຍບ້ານທີ່ຕົນເອງອາໄສຢູ່ (ສະບັບຕົ້ນ);

- ສຳເນົາປະກາສະນິຍະບັດ ແລະ ໃບຄະແນນ (ເວລາຜູ້ສະໝັກມາຍື່ນເອກະສານໃຫ້ຖືໃບປະກາສະນິຍະບັດ ແລະ ໃບຄະແນນ ສະບັບຕົ້ນມາຢັ້ງຢືນ);
- ໃບຢັ້ງຢືນທີ່ຢູ່ (ສະບັບຕົ້ນ);
- ໃບຢັ້ງຢືນຮັບປະກັນຈາກຜູ້ປົກຄອງ ແລະ ເຊັນຢັ້ງຢືນນາຍບ້ານທີ່ຕົນອາໄສຢູ່ (ສະບັບຕົ້ນ);
- ໃບກວດສຸຂະພາບຈາກໂຮງໝໍລັດຢູ່ສູນກາງ (ສະບັບຕົ້ນ);
- ໃບແຈ້ງໂທດບໍ່ເກີນ 3 ເດືອນ (ສະບັບຕົ້ນ);
- ສຳເນົາໃບຢັ້ງຢືນການຍົກລະດັບຜ່ານງານຕ່າງໆ (ຖ້າມີ);
- ຮູບຖ່າຍສີ ຫຼື ຂາວດຳ ຂະໜາດ 3X4 ຈຳນວນ 02 ໃບ (ຖ່າຍບໍ່ເກີນ 3 ເດືອນ).

**2.** ໃຫ້ເຂົ້າມາສົ່ງເອກະສານສະໝັກງານດ້ວຍຕົນເອງ ຢູ່ກົມຈັດຕັ້ງແລະພະນັກງານ, ທະນາຄານແຫ່ງ ສປປ ລາວ (ບ້ານຊຽງຍືນ, ເມືອງຈັນທະບູລີ, ນະຄອນຫຼວງວຽງຈັນ).

**3.** ເປີດຮັບເອກະສານສະໝັກງານ ເລີ່ມແຕ່ວັນທີ **19 ເມສາ 2023 - 05 ພຶດສະພາ 2023.**

**4.** ຈັດສອບເສັງຄັດເລືອກ **1** ວັນ ໃນວັນທີ **13 ພຶດສະພາ 2023** (ຕອນເຊົ້າ ສອບເສັງພາກຂຽນ ແລະ ຕອນບ່າຍ ສອບເສັງພາກປະຕິບັດຕົວຈິງ).

- ລາຍລະອຽດເພີ່ມເຕີມສາມາດພົວພັນໄດ້ຕາມເບີໂທຕິດຕໍ່ທີ່ລະບຸຢູ່ດ້ານລຸ່ມ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງບັນດາທ່ານ ທີ່ມີຄວາມສົນໃຈ ເພື່ອຮັບຊາບຕາມເນື້ອໃນຈິດໃຈແຈ້ງການນີ້ດ້ວຍ.

ເຫັນແທນ ຫົວໜ້າຫ້ອງການ

ທະນາຄານແຫ່ງ ສປປ ລາວ ຫ້ອງການ

ສຸກັນ ຈັນທະວົງ

ເບີໂທຕິດຕໍ່ ກົມຈັດຕັ້ງແລະພະນັກງານ 021 213216